ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ແຂວງອັດຕະປື

ເລກທີ:...388........../ຈຂ.ອປ

ສາມັກຄີໄຊ, ລົງວັນທີ:..26 ເມສາ 2016

## ຄໍາສັ່ງແນະນໍາຂອງເຈົ້າແຂວງ.

ວ່າດ້ວຍການສະກັດກັ້ນກຸ່ມຄົນບໍ່ດີທີ່ລັກເອົາອຸປະກອນສາຍສົ່ງໄຟຟ້າແຮງສູງ ແລະ ຫ້າມບໍ່ໃຫ້ປູກຕົ້ນໄມ້, ສິ່ງປຸກສ້າງຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ ໃນຂອບເຂດແຂວງອັດຕະປື.

- ອີງຕາມ : ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບເລກທີ: 03/ສພຊ, ນະຄອນຫຼວງວຽງຈັນ, ລົງວັນທີ: 21 ຕຸລາ 2003.
- ອີງຕາມ : ກົດໝາຍວ່າດ້ວຍໄຟຟ້າ ສະບັບເລກທີ: 037/ສພຊ, ລົງວັນທີ: 08 ທັນວາ 2008.
- ອີງຕາມ : ໜັງສືສະເໜີຂອງລັດວິສາຫະກິດ ຝ່າຍຄຸ້ມຄອງລະບົບສາຍສົ່ງ ແລະ ສະຖານີ, ຫ້ອງການຄຸ້ມຄອງລະບົບສາຍສົ່ງພາກໃຕ້ ສະບັບເລກທີ: 864/ຟຟລ, ຄບສ,ພຕ, ປາກເຊ ລົງວັນທີ: 1/9/2015.

ຜ່ານມາໄດ້ມີກຸ່ມຄົນບໍ່ດີຈໍານວນໜຶ່ງ ໄດ້ລັກເອົາຊິ້ນສ່ວນອຸປະກອນເຫຼັກສານເສົາໄຟຟ້າແຮງສູງ ເຊິ່ງເປັນຊັບສິນຂອງຊາດ, ຖືກເສຍຫາຍເປັນຈໍານວນຫຼວງຫຼາຍ, ເຮັດໃຫ້ສູນເສຍງົບປະມານໃນການສ້ອມແປງ, ບໍາລຸງຮັກສາເປັນຈໍານວນບໍ່ໜ້ອຍ ແລະ ບາງຂົງເຂດຍັງມີຕົ້ນໄມ້ອຸດສາຫະກໍາທີ່ໃຫຍ່, ສິ່ງປຸກສ້າງທີ່ຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ, ເຊິ່ງກໍ່ໃຫ້ເກີດໄຟຕົກ, ໄຟມອດ ແລະ ຂັດກັບເຕັກນິກຂອງໄຟຟ້າລາວ; ເພື່ອສະກັດກັ້ນກຸ່ມຄົນທີ່ບໍ່ດີ ແລະ ບັນຫາຕ່າງໆທີ່ອາດຈະເກີດຂຶ້ນໃຫ້ທັນການ.

ເຈົ້າແຂວງອອກຄໍາສັ່ງແນະນໍາດັ່ງນີ້:

1. ໃຫ້ພະແນກການ, ກົມກອງ, ເຈົ້າເມືອງ, ກຸ້ມບ້ານ ແລະ ບ້ານປະສານສົມທົບຮ່ວມມືກັນ ໃນການຕິດຕາມບຸກຄົນ, ກຸ່ມຄົນບໍ່ດີລັກເອົາອຸປະກອນ ເຫຼັກສານເສົາໄຟຟ້າແຮງສູງຕາມຈຸດຕ່າງໆ ແລະ ບັນດາຮ້ານເກັບຊື້ເຫຼັກເສດທີ່ມີອຸປະກອນເຫຼັກສານເສົາສາຍສົ່ງໄຟຟ້າແຮງສູງມາຄອບຄອງ, ຖ້າຫາກພົບເຫັນແມ່ນໃຫ້ລາຍງານເຈົ້າໜ້າທີ່ ຫຼື ອໍານາດການປົກຄອງບ້ານ ເພື່ອກັກຕົວຜູ້ກ່ຽວມາດໍາເນີນຄະດີຕາມລະບຽບກົດໝາຍ.
2. ໃຫ້ທ່ານເຈົ້າເມືອງ 05 ຕົວເມືອງອອກຄໍາສັ່ງແຈ້ງການໃຫ້ແຕ່ລະບ້ານ,ແຕ່ລະກົມກອງ ແລະ ຫ້ອງການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຮັບຊາບ.

2.1. ໃຫ້ແຕ່ງຕັ້ງຄະນະກໍາມະການຄຸ້ມຄອງຂັ້ນເມືອງ ແລະ ບ້ານທີ່ມີສາຍສົ່ງໄຟຟ້າແຮງສູງຜ່ານ, ໂດຍປະກອບມີພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ບ້ານເປັນເຈົ້າການໃນການຕິດຕາມກວດກາເປົ້າໝາຍ ກຸ່ມຄົນທີ່ບໍ່ດີ

ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອລາຍງານໃຫ້ຫ້ອງການຄຸ້ມຄອງລະບົບສາຍສົ່ງໄຟຟ້າພາກໃຕ້, ພະແນກຄຸ້ມຄອງລະບົບສາຍສົ່ງປະຈຳແຂວງ ຫຼື ສະຖານີໄຟຟ້າຮັບຊາບ.

2.2. ໃຫ້ບ້ານ, ກຸ້ມບ້ານ ແຈ້ງໃຫ້ປະຊາຊົນຮັບຊາບ, ບໍ່ອະນຸຍາດໃຫ້ປຸກສ້າງເຮືອນ, ຮ້ານ ແລະ ປູກໄມ້ໃຫຍ່ໃສ່ກ້ອງ ແລະ ໃກ້ແລວສາຍສົ່ງໄຟຟ້າແຮງສູງ ເປັນຕົ້ນແມ່ນ: ຕົ້ນຢາງພາລາ, ໄມ້ເກດສະໜາ, ໄມ້ສັກ ແລະ ອື່ນໆ ທີ່ຂັດຕໍ່ມາດຕະຖານເຕັກນິກຂອງໄຟຟ້າລາວ, ຖ້າບຸກຄົນໃດລະເມີດແມ່ນຈະບໍ່ມີການຊົດເຊີຍແຕ່ຢ່າງໃດ.

- ໃຫ້ພະແນກຄຸ້ມຄອງລະບົບສາຍສົ່ງປະຈຳແຂວງ ຫຼື ສະຖານີສາຍສົ່ງໄຟຟ້າ ສົມທົບກັບບ້ານ ລົງຕິດຕາມກວດກາແລວສາຍສົ່ງໄຟຟ້າແຮງສູງ ຖ້າຫາກມີສິ່ງປຸກສ້າງ ທີ່ຂັດຕໍ່ມາດຕະຖານເຕັກນິກໄຟຟ້າລາວ ແມ່ນສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງລະດົມຍົກຍ້າຍອອກຈາກແລວສາຍສົ່ງໄຟຟ້າແຮງສູງ ເພື່ອຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນ ພ້ອມທັງສະດວກໃນການຄຸ້ມຄອງຮັກສາແລວສາຍສົ່ງໄຟຟ້າ.
- ຫ້າມ ບັນດາຮ້ານເກັບຊື້ - ຂາຍ ເຫຼັກເສດ ຮັບຊື້ອຸປະກອນ ເຫຼັກສານເສົາໄຟຟ້າແຮງສູງ ຈາກກຸ່ມຄົນທີ່ບໍ່ດີທີ່ລັກລອບເອົາມາຂາຍຢ່າງເດັດຂາດ, ຖ້າຫາກເຈົ້າໜ້າທີ່ພົບເຫັນຈະຖືກປັບໃໝ ແລະ ກັກຕົວມາດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.

3. ໃຫ້ບັນດາເມືອງ, ພະແນກ, ກົມກອງ ແລະ ລັດວິສາຫະກິດໃນທົ່ວແຂວງອັດຕະປື ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

4. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ນິຕິກຳອື່ນທີ່ຂັດກັບຄຳສັ່ງສະບັບນີ້ແມ່ນຖືກລຶບລ້າງ.

ເຈົ້າແຂວງໆອັດຕະປື.

ດຣ.ນາມ ວິຍະເກດ

+ <u>ບ່ອນສົ່ງ</u>:

| | |
|---|---|
| - ພະແນກພະລັງງານ ແລະ ບໍ່ແຮ່ແຂວງ | 1 ສະບັບ |
| - ເມືອງສະໜາມໄຊ | 1 ສະບັບ |
| - ເມືອງສາມັກຄີໄຊ | 1 ສະບັບ |
| - ລັດວິສາຫະກິດໄຟຟ້າລາວ | 1 ສະບັບ |
| - ສະຖານີໄຟຟ້າສະເພົາທອງ | 1 ສະບັບ |
| - ສຳເນົາ | 2 ສະບັບ |